# ພອນປີໃຫມ່

ໂດຍ: ບ່າວຫຼັກເຈັດ

ພໍປີເກົ່າເຄື່ອນຍ້າຍ ປີໃຫມ່ຫມຸນວຽນມາ
ປີລະກາ ນາມກຸຕໂຕ ໄກ່ຜູ້ໂຈຂັນໂຈ້ນ
ປວງຊົນລາວທັງຄ້າຍ ສລອງໄຊຫວັງຮັບໂຊກ
ໂຣຄພັຍພານພະຍາດຮ້າຍ ໃຫ້ຫາຍສ້ຽງແລ່ນກາຍ ແດ່ທ້ອນ

ຄືວ່າ ເດືອນເມສາຕັ້ງໄວ້ ເປັນປີໃຫມ່ກຸດສົງການ
ສັງຂານໂຄຈອນພົບ ຄົບຄວບປີລາວຕັ້ງ
ຟັງສຽງໄຊໂຍຮ້ອງ ສຽງເນືອງນອງກ້ອງສິ່ງ
ທັງທົດສົງຜູ່ເຖົ້າ ບູຊາເຈົ້າພຸທມັງ ຈິງແລ້ວ

ຊາວພຸທ ພາກັນສົງສວ່າຍລ້າງ ຄວາມຂີ້ດຽດໃຫ້ຫນີກາຍ
ຄວາມອັບປີຈັງໄຣ ໃຫ້ຫ່າງກາຍຫາຍລ້ຳ
ປີໃຫມ່ ນຳເອົາຄວາມສົດຊື່ນ ເຂົ້າມາຄືນແທນທີ່
ທັງຄວາມຮັກ ຄວາມຫວັງດີ ໃຜຜູ່ມີຢູ່ແລ້ວ ຢ່າຄາຍແຄ້ວຄາດຫາຍ

ລາງພ່ອງ ພາກັນເກັບດອກໄມ້ ເພື່ອຍໍຍົກບູຊາທັມ
ຫວັງນຳເອົາຄວາມສຸຂ ສູ່ຄອບຄົວເຮືອນຢ້າວ
ປວງຊົນລາວເຮົາຖືຫມັ້ນ ວັນສຳຄັນຖ້ວນທີ່
ເພາະເປັນບຸນປະເພນີ ກຸດສົງການສົງພຣະເຈົ້າ ອົງເຄົ້າພຸທການ ສາທຸ

ບັດນີ້ ຮຽມຈັກຂໍກ່າວຕ້ານ ຂານສິ່ງເປັນພອນໄຊ ກ່ອນແລ້ວ
ປວງຊົນລາວທັງຫຼາຍ ຢູ່ສະບາຍຫາຍຮ້ອນ
ຂໍອ່ວຍພອນຢ່າຫມອງເສົ້າ ຫຼີເຫງົາໃຈເອົາອັ່ງ

ສຸຂສົມຫວັງກັນທົ່ວຫນ້າ ໃຫ້ຫາໄດ້ຊອກເຫັນ ແດ່ທ້ອນ

ອັນວ່າ ສິ່ງບໍ່ດີໃຫ້ຫຼີກເວັ້ນ ເຄາະເຂັນຫ່າງຫນີກາຍ
ຄວາມຈັງໄຮຢ່າມາບຽນ ຫຼີບຽດສີພານຕ້ອງ
ຄິດສິ່ງໃດຢ່າຂັດຂ້ອງ ສນອງໃຈໄດ້ທຸກສິ່ງ
ຝັນສິ່ງໃດໃຫ້ເປັນຈິງ ອີງໃສ່ຄວາມມຸ້ງຫມັ້ນ ຊີວັນຊື່ນແຈ່ມໃສ

ສາທຸ ຂໍໃຫ້ລຸລາພໄດ້ ສົມດັ່ງມະໂນນຶກ
ບຸກບືນທຳງານໃດ ໃຫ້ຮຸ່ງເຮືອງຈະເຣີນກ້າວ
ມີແຕ່ສຸຂຢ່າມີເສົ້າ ປີໃຫມ່ລາວໃຫ້ຊຸ່ມຊື່ນ
ຄຶດໃຫ້ມາ ຄ້າໃຫ້ຂຶ້ນ ເລີງລົ້ນຕລອດປີ ຈິງແລ້ວ

ອັນວ່າ ປີວອກຫາກໍ່ຜ່ານນີ້ ກໍມີສິ່ງຄວນຊົງຈຳ
ບຸນຊັກນຳຫຼວງຫຼາຍ ຈຶ່ງໄດ້ໄປໂຮມເຕົ້າ
ນຳເອົາຄຣູອາຈານພ້ອມ ມາຊຸມກັນຮວມຫມູ່
ຄຣູຫຼັກເຈັດນັບຮ້ອຍ ມາພຽງພ້ອມຮ່ວມປະສານ

ພວກເຮົາ ຖືເປັນຈຸດບ່ອນບັ້ນ ເລີ້ມຕົ້ນແຫ່ງສາມັກຄີ
ຜູກສັມພັນທະໄມຕຣີ ເປັນສິ່ງດີເອົາໄວ້
ສິ່ງໃດຄາຂັດຂ້ອງ ຫມອງໃຈໃຫ້ເຮົາປ່ຽນ
ຖືມານະຄວາມພຽນ ໃຫ້ສັງຄົມຮັບຮູ້ ເປັນຄຣູແທ້ຕລອດກາລ

ບັດນີ້ ຮຽມຂໍໄຂກ່າວຕ້ານ ແຖມສິ່ງຈັຕຸພອນ
ປະຊາກອນຊາວລາວ ທຸກເຜົ່າຊົນເຫນືອໃຕ້
ອາຍຸຂັຍຢ່າມີເສົ້າ ຫຼືເຫງົາໃຈໃຫ້ຊຸ່ມຊື່ນ
ມີອາຍຸຫມັ້ນຍືນ ພລັງໃຈທ່ຽງຫມັ້ນ ຊີວັນຊື່ນແຈ່ມໃສ

ສ່ວນວ່າ ວັນນະ ໃຫ້ ເຮືອງຮຸ່ງຈະເຣີນດີ

ມີຊັພສິນເງິນທອງ ກ່າຍກອງເຕັມຫ້າງ

ສິ່ງໃດຫວັງເອົາໄວ້ ຈົ່ງສົມໃຈໄດ້ທຸກສິ່ງ

ໃຫ້ຄວາມຝັນເປັນຈິງ ຄືຖືກລົຕຕາລີ່ ມີເງິນເຂົ້າຫຼັ່ງໄຫຼ ທຸກຄືນເດີ

ອີກໜຶ່ງ ສຸຂະໄດ້ ໃຫ້ມີແຕ່ຄວາມສຸຂ

ສິ່ງໃດເປັນຄວາມທຸກ ໃຫ້ຫ່າງເຫີນກາຍລ້ຳ

ນຳເອົາຄວາມສຸຂລົ້ນ ປວງຊົນລາວຢ່າຫມອງຫມົ່ນ

ຢ່າມີທຸກກັງວົນ ຫຼືຮ້ອນຮົນອັ່ງເອົ້າ ເຫງົາງ້ວງງ່ວມໃຈ

ສ່ວນບົດພອນມ້ວນທ້າຍ ນັ້ນໄດ້ແກ່ພາລະ

ພັຍໂຣຄາຢ່າມາບຽນ ພະຍາດຫາຍກາຍຊິ້ນ

ຢ່າເປັນວິນຫຼືເຈັບໄຂ້ ພະລານາໄມຂັນແຂ່ງ

ສຸຂພາບເຂັ້ມແຂງ ມີເຫື່ອແຮງຮັບໃຊ້ ວຽກງານສ້າງຄອບຄົວ ສາທຸແລ້ວ...